ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 4317/ກປ

ນະຄອນຫຼວງວຽງຈັນ, ວັນທີ 18 OCT 2022

# ຄຳສັ່ງ

## ກ່ຽວກັບການຫ້າມຂ້າສັດໃຫຍ່ຖືພາມານ

ເຖິງ: - ຫ້ອງການ, ບັນດາກົມ, ສະຖາບັນອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້;

- ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ການລ້ຽງສັດ ແລະ ສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 2741/ກລປ, ລົງວັນທີ 04 ຕຸລາ 2022;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ຄັ້ງລົງວັນທີ 05 ຕຸລາ 2022.

ການຈັດຕັ້ງປະຕິບັດແຜນງານຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ ແມ່ນມີຄວາມສຳຄັນ ແລະ ເປັນແຜນງານບູລິມະສິດຂອງຂະແໜງກະສິກຳ ແລະ ປ່າໄມ້ ເພື່ອສະໜັບສະໜູນໃຫ້ແກ່ ການຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເວົ້າລວມ, ເວົ້າສະເພາະ ແມ່ນການສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ.

ເພື່ອຈັດຕັ້ງປະຕິບັດແຜນງານດັ່ງກ່າວ ໃຫ້ໄດ້ຕາມແຜນການ ຂອງກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງເຫັນໄດ້ເຖິງຄວາມສຳຄັນກ່ຽວກັບ ການລ້ຽງງົວ, ຄວາຍ ເພື່ອຕອບສະໜອງທາງດ້ານສະບຽງອາຫານ ໃຫ້ແກ່ຄວາມຕ້ອງການພາຍໃນ ແລະ ສົ່ງອອກ ໂດຍສະເພາະແມ່ນຕະຫຼາດ ສປ ຈີນ.

ແຕ່ຢ່າງໃດກໍຕາມ ພວກເຮົາກໍຍັງມີຂໍ້ຈຳກັດ ໃນການພັດທະນາ ແລະ ຊົມໃຊ້ ງົວ, ຄວາຍ ຢູ່ໃນປະເທດເຮົາຫຼາຍດ້ານ ຍັງເຫັນວ່າ ບໍ່ທັນໄດ້ເອົາໃຈໃສ່ ໃນການພັດທະນາ, ອະນຸລັກ, ປົກປັກຮັກສາແນວພັນ ງົວ, ຄວາຍ ທີ່ດີ, ຍິ່ງໄປກວ່ານັ້ນ ຍັງພົບເຫັນ ປະກົດການຂ້າ ງົວ, ຄວາຍ ທີ່ຖືພາມານ ຢູ່ແຕ່ລະເຂດ ແລະ ທ້ອງຖິ່ນ ຊຶ່ງເປັນສາເຫດໜຶ່ງ ທີ່ເຮັດໃຫ້ຝູງສັດໃຫຍ່ ງົວ, ຄວາຍ ຂອງປະເທດເຮົາ ບໍ່ມີການຂະຫຍາຍຕົວເທົ່າທີ່ຄວນ. ສະນັ້ນ, ເພື່ອເປັນການສົ່ງເສີມການຂະຫຍາຍພັນສັດໃຫຍ່ໃຫ້ເພີ່ມຂຶ້ນ ພ້ອມທັງຫຼີກເວັ້ນ ແລະ ຫຼຸດຜ່ອນການຂ້າສັດປະເພດ ງົວ, ຄວາຍ ເພດແມ່ແບບບໍ່ຖືກຕ້ອງ ຕາມຫຼັກວິຊາການຂອງການລ້ຽງສັດ.



สแกนด้วย CamScanner

ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ຫ້ອງການ, ບັນດາກົມ, ສະຖາບັນ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງການໂຄສະນາເຜີຍແຜ່ ໃຫ້ຊາວກະສິກອນ ແລະ ຜູ້ປະກອບການໃນຂອບເຂດທົ່ວປະເທດ ກ່ຽວກັບ ການຂ້າສັດໃຫຍ່ ທີ່ຖືພາມານ ເປັນພຶດຕິກຳທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ ພ້ອມທັງ ປຸກລະດົມໃຫ້ປະຊາຊົນ, ຊາວກະສິກອນ ແລະ ຜູ້ປະກອບການ ບໍ່ໃຫ້ມີການ ຊື້-ຂາຍສັດດັ່ງກ່າວ ເພື່ອນຳໄປຂ້າ ແລະ ບໍລິໂພກ;
2. ໃຫ້ບັນດາ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ສຸມໃສ່ ສົ່ງເສີມ ຊາວກະສິກອນ ແລະ ຜູ້ປະກອບການ ໃຫ້ລ້ຽງງົວ, ຄວາຍ ເພດແມ່ ທີ່ຢູ່ໃນໄລຍະສາມາດໃຫ້ລູກໄດ້ດີ ເອົາໄວ້ເພື່ອທົດແທນ ຫຼື ຂະຫຍາຍຝູງສັດ. ພ້ອມທັງ ແຈ້ງການ ໃຫ້ບັນດາ ຜູ້ປະກອບການ ແລະ ໂຮງງານຂ້າສັດ, ບ່ອນຂ້າສັດຍ່ອຍ ຫ້າມບໍ່ໃຫ້ຂ້າສັດຖືພາມານຢ່າງເດັດຂາດ. ຖ້າຫາກມີຄວາມຈຳເປັນ ຕ້ອງການຂາຍ ແມ່ສັດຖືພາມານ ຫຼື ແມ່ສັດມີລູກຕິດ ຫ້າມບໍ່ໃຫ້ຂາຍ ເຂົ້າໂຮງງານຂ້າສັດ ແຕ່ສາມາດ ຂາຍໃຫ້ຜູ້ອື່ນນຳໄປລ້ຽງ. ການຂາຍສັດແມ່ເຂົ້າໂຮງງານຂ້າສັດ ຕ້ອງແມ່ນ ແມ່ສັດທີ່ມີລັກສະນະໃຫ້ລູກບໍ່ດີ, ປະສົມພັນບໍ່ຕິດ, ບໍ່ສາມາດໃຫ້ລູກ ຫຼື ສັດທີ່ໄດ້ຮັບບາດເຈັບ ທີ່ບໍ່ສາມາດປິ່ນປົວໄດ້ ເທົ່ານັ້ນ;
3. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ສຳຫຼວດ ຜູ້ລ້ຽງງົວ, ຄວາຍ ແລະ ເກັບກຳຂໍ້ມູນ ການຂະຫຍາຍພັນສັດໃຫຍ່, ສະຖິຕິສັດໃຫຍ່ເພດແມ່ ທີ່ສາມາດໃຫ້ລູກ ໃນແຂວງຂອງຕົນ ເພື່ອວາງແຜນພັດທະນາ ແລະ ຍົກສູງຄວາມອາດສາມາດໃນການຜະລິດ ແລະ ສົ່ງອອກ ຂອງທ້ອງຖິ່ນຕົນໃຫ້ ເໝາະສົມໃນແຕ່ລະໄລຍະ;
4. ໃຫ້ກົມລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຈັດຕັ້ງການຝຶກອົບຮົມດ້ານເຕັກນິກວິຊາການຕ່າງໆ ໃຫ້ແກ່ຊາວກະສິກອນ ແລະ ຜູ້ປະກອບການ ຮູ້ໄດ້ເຖິງເຕັກນິກ ໃນການລ້ຽງສັດ ແລະ ໃຫ້ອາຫານແກ່ສັດຖືພາມານ ຢ່າງຖືກຕ້ອງຕາມຫຼັກວິຊາການ;
5. ໃຫ້ກົມລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຍົກລະດັບຄວາມສາມາດໃຫ້ແກ່ ສັດຕະວະແພດບ້ານ, ພະນັກງານກວດກາອະນາໄມຊີ້ນ, ພະນັກງານວິຊາການຂັ້ນເມືອງ ກ່ຽວກັບເຕັກນິກການກວດສັດຖືພາມານ;
6. ໃຫ້ພາກສ່ວນກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຮັບຮູ້ ປະສານສົມທົບຊຶ່ງກັນ ແລະ ກັນ ເພື່ອຈັດຕັ້ງຜັນຂະຫຍາຍ ຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ, ພ້ອມທັງສະຫຼຸບລາຍງານ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;
7. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ. ໗.໑໕

ລັດຖະມົນຕີ

ບ່ອນນຳສົ່ງ:

| | |
|---|---|
| 1. ທ່ານ ລມຕ, ຮລມຕ ທ່ານລະ | 01 ສະບັບ |
| 2. ຫ້ອງການກະຊວງ ກປ | 01 ສະບັບ |
| 3. ກົມລ້ຽງສັດ ແລະ ການປະມົງ | 01 ສະບັບ |
| 4. ກົມແຜນການ ແລະ ການຮ່ວມມື | 01 ສະບັບ |
| 5. ບັນດາກົມວິຊາການກ່ຽວຂ້ອງພາກສ່ວນລະ | 01 ສະບັບ |
| 6. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ແຂວງລະ | 01 ສະບັບ |
| 7. ເກັບມ້ຽນ | 01 ສະບັບ |

ປອ. ເພັດ ພົມພິພັກ



สแกนด้วย CamScanner